# ການແຂ່ງຂັນກິລາບານເຕະມິດຕະພາບ ລະຫວ່າງ ທຄຕລ ແລະ ກົມບໍລິການ ປະສົມກັບ ກົມຈັດຕັ້ງ ທຫລ

ໃນວັນສຸກ, ວັນທີ 08 ກໍລະກົດ 2016 ເວລາ 17:30 ໂມງ ໄດ້ມີການຈັດກິດຈະກໍາການແຂ່ງຂັນກິລາບານເຕະມິດຕະພາບ ລະຫວ່າງ **ກົມບໍລິການ ແລະ ກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປລາວ** ພົບກັບ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ຢູ່ທີ່ເດີ່ນບານເຕະເທບປັນຍາ. ຈຸດປະສົງຂອງການຈັດການແຂ່ງຂັນກິລາ ແມ່ນເພື່ອສ້າງຄວາມສາມັກຄີລະຫວ່າງພະນັກງານ ຂອງສອງພາກສ່ວນໃຫ້ແໜ້ນແຟ້ນ ແລະ ເຮັດໃຫ້ການພົວພັນຮ່ວມມືວຽກງານລະຫວ່າງ 2 ພາກສ່ວນ ມີຄວາມຄ່ອງຕົວ ແລະ ໄດ້ຮັບຜົນສໍາເລັດ.

ການແຂ່ງຂັນຄັ້ງນີ້ ເຕັມໄປດ້ວຍບັນຍາກາດເບີກບານມ່ວນຊື່ນ, ຄວາມສາມັກຄີຮັກແພງ ແລະ ມີນໍ້າໃຈນັກກິລາເຊິ່ງກັນ ແລະ ກັນ, ຜົນຂອງການແຂ່ງຂັນກິລາບານເຕະ ທີມທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສາມາດເອົາ **ຊະນະ** ທີມຈາກກົມບໍລິການ ປະສົມກັບ ກົມຈັດຕັ້ງ ທຫລ **5** ປະຕູຕໍ່ **3.** ໃນໂອກາດດັ່ງກ່າວ ທຄຕລ ຍັງໄດ້ມອບເຄື່ອງກິລາໃຫ້ທີມນັກກິລາພາກສ່ວນດັ່ງກ່າວຈໍານວນ 15 ຊຸດ; ເຊິ່ງກ່າວມອບໂດຍ **ທ່ານ ຄອນປະເສີດ ຫຼວງສຸວັນນະວົງ** ຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ.



ພາບ ແລະ ຂ່າວໂດຍ: ທ້າວ ສຸລິຍົງ ສຸກຈັນດີ